ວິທີການປູກໝາກໂມ

ໂດຍ:ສຸລິວົງ ກອງມະນີວົງ,ສູນຂໍ້ມູນຂ່າວສານ

ວິທີຊ່ວຍໃຫ້ແກ່ນໝາກແຕງໂມງອກໄວຂຶ້ນ

ສຳລັບການຢອດແກ່ນໝາກໂມໃນລະດູໜາວມັກຈະພົບວ່າ ແກ່ນແຕກງອກຊ້າຫຼືບໍ່ງອກເລີຍທັ້ງນີ້ເພາະວ່າຖ້າອຸ່ນຫະ ພູມໃນດິນປູກຕ່ຳກວ່າ 15.5 0C ແກ່ນໝາກໂມຈະບໍ່ງອກ ໂດຍທຳມະຊາດ.ສະ ນັ້ນເພື່ອເປັນ 1ວັນກັບ 1 ຄືນແລ້ວ ເອົາຜ້າປູກຫໍ່ວາງໄວ້ບ່ອນອື່ນໃນບ້ານຈະຊ່ວຍໃຫ້ແກ່ນໝາກໂມງອກໄວຂຶ້ນ ແລະ ງອກໄດ້ຢ່າງສະໝ່ຳ ສະເໝີ.ເມື່ອຮາກເລີ່ມອອກຈາກແກ່ນກໍ່ເອົາໄປຊຳໄວ້ໃນຖົງ ຫຼືກະຊວຍໃບຕອງລໍຖ້າໃຫ້ມັນມີໃບ 2-3 ໃບ ແລ້ວຈຶ່ງລົງປູກໃນສວນ ຫືຖ້າບໍ່ສະດວກເພາະຕ້ອງປະຍັດແຮງງານກໍ່ນຳເອົາແກ່ນທີ່ງອກນັ້ນໄປປູກໃນໝ ານໄດ້ເລີຍໂດຍຢອດລົງໃນຂຸມແບບດຽວກັບແກ່ນທີ່ຍັງບໍ່ງອກແຕ່ຕ້ອງ ໄດ້ຫົດນ້ຳໃນຂຸມທີ່ຈະຢອດໄວ້ລ່ວງ ໜ້າໄວ້ 1 ວັນ ເພື່ອຄວາມສະດວກໃນການຢອດເມັດທີ່ງອກ. ຫຼັງຈາກຢອດແກ່ນແລ້ວຄວນຖົມດິນໜາບໍ່ ເກີນ 1 ຊຕມ. ແລ້ວຫົດນ້ຳຫຼັງຈາກນັ້ນເບ້ນໝາກໂມກໍ່ຈະຂຶ້ນມາຢ່າງສະໝ່ຳສະເໝີກັນ

ຝຸ່ນ ແລະ ການໃຫ້ຝຸ່ນ

ຝຸ່ນຄອກ ການໃສ່ຝຸ່ນຄອກໃຫ້ເບ້ຍໝາກໂມມີຄວາມສຳຄັນຫຼາຍ ເພາະຝຸ່ນຄອກຈະຊ່ວຍໃຫ້ດິນລ້ວນໂປ່ງ, ມີທາດອາຫານຫຼາຍຂຶ້ນ.ນອກນັ້ນຍັງເຮັດຝຸ່ນວິທະຍາສາດຢູ່ໃນພາວະສົມດູນເປັນປະໂຫຍດຕໍ່ພືດຫຼາຍຂຶ້ນ. ຄວນໃສ່ຝຸ່ນຄອກໃນພື້ນທີ່ອັດຕາ 1 ໄລ່(1,600 ມ2)ຕໍ່ 2-4 ໂຕນ

ຝຸ່ນວິທະຍາສາດ ຫຼື ປຸຍເຄມີ

ຄວນໃຊ້ປຸຍເຄມີ ອັດຕາສ່ວນ 1:1:2 ເຊິ່ງໄດ້ແກ່ປຸຍເຄມີສູດ 10-10-20ຫຼືເປັນຕົ້ນໃຊ້ປຸຍສູດໃກ້ຄຽງໄດ້ ເຊັ່ນ: ປຸຍສູດ 13-13-21 ໃສ່ໃນອັດຕາໄລ່ລະ100-150 ກິໂລກຼາມ ຈະຕັດສິນໃຈໃຊ້ປຸຍຫຼາຍ ຫຼືໜ້ອຍກໍ່ ຕ້ອງເບິ່ງຄວາມອຸດົມສົມບູນຂອງດິນ ແລະລາຄາໝາກໂມປະກອບກັນ ຕາມປົກກະຕິແລ້ວຈະໃຊ້ຝຸ່ນວິທະ ຍາສາດ ປະມານ 120-150 ກິໂລກຼາມ/ໄລ່ ລະດູປູກ

ວິທີການໃສ່ຝຸ່ນໃຫ້ເຄືອໝາກໂມ

ຜູ້ປູກໝາກໂມສ່ວນຫຼາຍຈະນິຍົມໃສ່ປຸຍເຄມີລົງພື້ນດິນໂດຍຫວ່ານ ຫຼື ກອງໄວ້ເທິງໜ້າດິນແລ້ວຫົດນ້ຳ ເພື່ອໃຫ້ປຸຍລະລາຍລົງໄປສູ່ຮາກໝາກໂມ.ການໃສ່ປຸຍວິທີນີ້ເປັນວິທີເຮັດໃຫ້ເປືອງປຸຍຫຼາຍ.ພືດທາດຈະໄດ້ ຮັບທາດໄນໂຕເຈນກັບໂປເຕຊຽມຈາກປຸຍເຄມີເທົ່ານັ້ນແຕ່ຈະບໍ່ໄດ້ຮັບທາດຟົສຟໍຣັສ ຈາກປຸຍເຄມີນັ້ນເລີຍ ຫຼື ໄດ້ຮັບກໍ່ພຽງເລັກໜ້ອຍເທົ່ານັ້ນ ເພາະຕາມປົກກະຕິແລ້ວທາດຟົສຟໍຣັສ ຈະບໍ່ເຄື່ອນຍ້າຍຈາກໜ້າດິນ ລົງໄປສູ່ຮາກເຄືອໝາກໂມແຕ່ຢ່າງໃດ ຊຶ່ງທາດທີ່ຈຳເປັນຕໍ່ການຈະເລີນເຕີບໂຕຂອງເຄືອໝາກໂມ ຫຼາຍ ສົມຄວນ

ຕໍ່ຈາກສະບັບທີ 106